**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດທີ 27 ພຶສຈິກາ 2022 (11-27-2022)**

---

**ສາມເຫດຜົນສຳລັບການຂອບພຣະຄຸນ.**

*ມີເຫດການອັນໃດແດ່ທີ່ຜ່ານເຂົ້າມາໃນຊີວິດຂອງທ່ານຕອນນີ້ທີ່ຢາກຂອບພຣະຄຸນພຣະເຈົ້າ?*

**ຈຸດສຳຄັນໃນບົດຮຽນ:** ຈົ່ງຂອບພຣະຄຸນພຣະເຈົ້າສຳລັບວິທີທີ່ພຣະເຈົ້າທຳງານຢູ່ໃນຊີວິດຂອງທ່ານ.

**ພຣະຄັມພີຕອບສນອງຊີວິດ:**

ບໍ່ວ່າຈະເປັນເຂົ້າໜົມຄຸກກີ້ທີ່ອົບຈົນໄໝ້ຫຼືກາເຟທີ່ລົ້ນຂ້ວາມ, ບໍ່ມີຜູ້ໃດມັກອຸປະຕິເຫດເຣື່ອງອາຫານ. ເຖິງປານນັ້ນ, ພວກເຮົາກໍມີສິ່ງດີອັນນຶ່ງທີ່ເປັນຜົນສະທ້ອນມາຈາກອຸປະຕິເຫດທາງອາຫານ. ເປີຊີ ສເປັນເຊີ, ເກີດຢູ່ໃນຣັດ ເມນ ໃນປີ 1894, ໄດ້ໄປອາສັຍຢູ່ກັບປ້າຂອງລາວໃນເວລາທີ່ລາວເປັນເດັກກຳພ້າ. ເພື່ອຊ່ວຍທາງດ້ານການເງິນ, ລາວໄດ້ອອກຈາກໂຮງຮຽນໃນຊັ້ນຮຽນ ປ 5 ແລະໄດ້ເຮັດວຽກບ່ອນທຳອິດຂອງລາວ. ງານດ້ານກ່ຽວກັບໄຟຟ້າດຶງຄວາມສົນໃຈຂອງລາວ, ດັ່ງນັ້ນເມື່ອໂຮງງານເຈັ້ຽປະຈຳທ້ອງຖິ່ນປ່ຽນເປັນໂຮງງານໄຟຟ້າ, ຕອນນັ້ນເປີຊີອາຍຸໄດ້ສິບຫົກປີ, ໄດ້ໂນ້ມຈິດໃຈເຈົ້າຂອງໂຮງງານວ່າລາວສາມາດຈະຊ່ວຍໄດ້. ໂດຍການສຶກສາຈາກປຶ້ມ "ເຮັດວິທີໃດ" ໃນຕອນກາງຄືນແລະການຕິດຕັ້ງສາຍໄຟຟ້າໃນເວລາກາງເວັນ, ລາວໄດ້ກາຍເປັນນາຍຊ່າງໄຟຟ້າທີ່ສຳນານ. ບໍຣິສັດພັດທະນາຜະລິດຕະພັນໄຟຟ້າໄດ້ຈ້າງ ເປີຊີ ໃນປີ 1925. ຕໍ່ມາ, ໃນຂນະທີ່ເຮັດວຽກກັບທໍ່ໄມກະໂຣເວຟເພື່ອປັບປຸງລະບົບເຣດາເຮືອດຳນໍ້າ, ເປີຊີ ໄດ້ສັງເກດເຫັນວ່າແທ່ງຊ໊ອກໂກແລັດໄດ້ເປື່ອຍໃນຖົງເສື້ອຂອງລາວ. ຈາກເຫດການດັ່ງກ່າວ, ລາວໄດ້ສືບຕໍ່ພັດທະນາສິ່ງທີ່ໄດ້ກາຍມາເປັນເຕົາອົບໄມກະໂຣເວຟ.

ບາງຄັ້ງຄວາມດີກໍເກີດມາຈາກສະຖານະການທີ່ບໍ່ດີ. ມື້ນີ້ພວກເຮົາຈະມາສຶກສາເພັງສັຣເສີນທີ່ໄດ້ພັນລະນາເຖິງສມັຍທີ່ໄພ່ພົນຂອງພຣະເຈົ້າປະສົບກັບວິກິດການ. ພຣະເຈົ້າໄດ້ຕອບສນອງແນວໃດ? ໄພ່ພົນຂອງພຣະເຈົ້າຕອບສນອງແນວໃດ? ພວກເຂົາຈະຈົ່ມໃຫ້ກັບພຣະເຈົ້າຫຼືຮູ້ບຸນຄຸນຂອງພຣະເຈົ້າ.

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

**<u>ສຶກສາພຣະຄັມພີ</u>**

**1. ເພັງສັຣເສີນ 107:1-3**

*1. ຈົ່ງຂອບພຣະຄຸນພຣະຜູ້ເປັນເຈົ້າ ເພາະຄວາມດີຂອງພຣະອົງຄວາມຮັກຂອງພຣະອົງຊົງມີຕະຫລອດໄປ. 2. ບັນດາຜູ້ທີ່ພຣະອົງຊົງຊ່ອຍໃຫ້ພົ້ນພັຍ ຈົ່ງຮ່ວມກັນສັນລະເສີນພຣະຜູ້ເປັນເຈົ້າ ເພາະພຣະອົງໄດ້ຊົງຊ່ອຍຊີວິດຂອງພວກເຂົາອອກຈາກເງື້ອມມືຂອງສັດຕູ. 3. ແລະນຳພວກເຂົາອອກມາຈາກຕ່າງປະເທດ ຈາກທິດຕາເວັນອອກແລະທິດຕາເວັນຕົກ ຈາກທິດເໜືອແລະທິດໃຕ້.*

ຍ້ອນວ່າພຣະຄຳກ່າວຢ່າງເລິກເຊິ່ງໃນຫົວໃຈຂອງພວກເຮົາໃນລະດັບມາດຕະຖານສ່ວນຕົວ, ພວກເຮົາບາງຄັ້ງຈຶ່ງເບິ່ງຂ້າມຂໍ້ມູນຈິງທີ່ວ່າບົດເພັງສັຣເສີນເປັນປຶ້ມເພງຂອງຊາວອິສຣາເອັນບູຮານ. ພວກເຮົາອາດລືມໄປວ່າຫຼາຍສະຕະວັດກ່ອນນີ້ຜູ້ນຳດົນຕຣີຄົນນຶ່ງໄດ້ຮ້ອງເພງເຫຼົ່ານີ້ດ້ວຍຕົນເອງ, ນຳພາກຸ່ມນັກຮ້ອງເພື່ອຮ້ອງເພງເຫຼົ່ານີ້, ຫຼືໄດ້ຢືນຢູ່ຕໍ່ໜ້າປະຊາຄົມທັງໝົດແລະໄດ້ນຳພາຄົນເຫຼົ່ານັ້ນໃຫ້ຮ້ອງເພງໃນການນະມັສການພຣະເຈົ້າໂດຍໃຊ້ຄຳເວົ້າເຫຼົ່ານີ້. ບົດເພງສັຣເສີນ 107 ເລີ້ມຕົ້ນດ້ວຍການຮຽກຮ້ອງເພື່ອສະແດງຄວາມກະຕັນຍູຮູ້ບຸນຄຸນຕໍ່ພຣະເຈົ້າ: "ຂໍຂອບພຣະຄຸນພຣະຜູ້ເປັນເຈົ້າ." ໃນພາສາເຮັບເຣີ, ຄຳນີ້ເປັນຄຳທີ່ມີຄວາມໝາຍຫຼາຍແລະເປັນຄຳສັ່ງ, ດັ່ງນັ້ນ, ປໂຍກທີ່ຂຶ້ນຕົ້ນຈຶ່ງເປັນການຮຽກຮ້ອງສຳລັບໄພ່ພົນຂອງພຣະເຈົ້າທັງໝົດເພື່ອໃຫ້ຂອບໃຈອົງພຣະຜູ້ເປັນເຈົ້າໃນຂນະທີ່ພວກເຂົາ

ນະມັສການພຣະອົງ. ຖ້ອຍຄຳຂອງບົດເພງສັຣເສີນ 107 ໃຫ້ຫຼັກຖານຂອງຈິດໃຈທີ່ມີຄວາມສຸກ: ພວກເຂົາຮ້ອງຂຶ້ນດ້ວຍຄວາມຈິງໃຈຂອງຄວາມຮູ້ສຶກເປັນພະຍານທີ່ມາຈາກຜູ້ທີ່ມີຊີວິດຢູ່ໂດຍຜ່ານສິ່ງທີ່ບົດເພງສັຣເສີນພັນລະນາ. ເຊັ່ນດຽວກັບວົງວຽນຂອງຈຸດສູນກາງທີ່ເຄື່ອນອອກໄປຂ້າງນອກຄືກັບກະແສນ້ຳໄຫຼ, ປະໂຍກຂຶ້ນຕົ້ນບົດເພງໄດ້ຂະຫຍາຍອອກເພື່ອເປີດເຜີຍເຫດຜົນທີ່ເຮົາຕ້ອງຂອບພຣະຄຸນ. ວົງກົມຂອງສູນກາງເວົ້າເຖິງພຣະລັກສນະແລະຄວາມເປັນພຣະເຈົ້າຂອງພຣະອົງ: “ເພາະພຣະເຈົ້າຊົງດີ.” ສິ່ງດັ່ງກ່າວສະທ້ອນເຖິງຄຸນລັກສນະອັນສູງສົ່ງຂອງພຣະເຈົ້າ: ຄວາມດີຂອງພຣະອົງ.

*ພຣະເຈົ້າໄດ້ສະແດງຫຍັງແດ່ແກ່ທ່ານວ່າພຣະອົງຊົງດີ?*

ພວກເຮົາຫຼາຍຄົນໄດ້ຢືນຢັນເຖິງຄຸນງາມຄວາມດີຂອງພຣະອົງໃນພຣະພອນທີ່ພວກເຮົາກ່າວເຖິງຂນະທີ່ເປັນເດັກນ້ອຍ: “ພຣະເຈົ້າຍິ່ງໃຫຍ່; ພຣະເຈົ້າຊົງດີ. ໃຫ້ພວກເຮົາຂອບພຣະຄຸນພຣະອົງສຳລັບອາຫານປະຈຳວັນຂອງພວກເຮົາ,” ຄວາມຈິງທີ່ວ່າພຣະເຈົ້າຊົງດີສເມີນັ້ນເປັນຄວາມຄິດທີ່ເປັນເອກະລັກສະເພາະໃນບັນດາສາສນາທີ່ໃກ້ກັບຊາວຕາວັນອອກບູຮານ. ພະປອມທີ່ຜູ້ນັບຖືນະມັສການນັ້ນແມ່ນບໍ່ແນ່ໃຈ. ອັນທີ່ເອີ້ນວ່າພະເຈົ້າເຫຼົ່ານັ້ນແມ່ນໂຫດຮ້າຍແລະມີໃຈພະຍາບາດ. ຄວາມຈິງທີ່ວ່າພຣະເຈົ້າຂອງຊາວອິສຣາເອັນເປັນພຣະເຈົ້າທີ່ດີໄດ້ເຮັດໃຫ້ພຣະອົງແຕກຕ່າງຈາກພະຫຽມ, ເທບພະເຈົ້າປອມ, ແລະຮູບປັ້ນຕ່າງໆທີ່ຄົນອື່ນໆໃຫ້ຄວາມເຄົາລົບ. ສິ່ງນີ້ນຳພວກເຮົາໄປໃນວົງກົມທີສອງຂອງພວກເຮົາ. ອອກຈາກຄວາມດີຂອງພຣະອົງ “ຄວາມຮັກອັນສັດຊື່ຂອງພຣະອົງ.” ຄຳນີ້ໄດ້ໃຫ້ຄວາມໝາຍຄຳວ່າຄວາມຮັກທີ່ສັດຊື່ເປັນ “ຄວາມເມດຕາ,” “ພຣະຄຸນ,” “ຄວາມຮັກໝັ້ນຄົງ” “ຫຼື” ຄວາມປານີ.” ໃນພາສາອັງກິດບໍ່ມີຂໍ້ຄວາມອັນໃດທີ່ກວມເອົາທຸກແງ່ມຸມຂອງຄຳນີ້ໃນພາສາເຮັບເຣີ. ເຊັ່ນວ່າຄວາມດີ, ຄວາມຮັກສັດຊື່ນີ້ແມ່ນຄຸນລັກສນະຂອງພຣະເຈົ້າແຕ່ເດີມມາ. ພຣະພິໂລດຂອງພຣະເຈົ້າອາດຄົງຢູ່ຊົ່ວຄາວ, ແຕ່ຄວາມຮັກທີ່ສັດຊື່ຂອງພຣະອົງຄົງຢູ່ສືບໆໄປເປັນນິດ.

ຫຼັງຈາກນັ້ນເພງສັຣເສີນໄດ້ມາເຖິງສາມວົງກົມສຸດທ້າຍ-ວິທີການທີ່ພຣະເຈົ້າສະແດງຄວາມດີຂອງພຣະອົງແລະຄວາມຮັກທີ່ສັດຊື່ຂອງພຣະອົງ. ພຣະອົງໄດ້ “ໄຖ່” ລູກໆຂອງພຣະອົງ. ການໄຖ່ແມ່ນການຊື້, ຊື້ຄືນ, ຮຽກຮ້ອງ, ຫຼືປົດປ່ອຍຈາກອັນຕຣາຍ. ເປັນຮູບພາບທີ່ກ່ຽວຂ້ອງກັບຜູ້ທີ່ຢູ່ໃນສະຖານະການທີ່ບໍ່ສາມາດຊ່ວຍຕົນເອງຫຼືປົດປ່ອຍຕົນເອງໄດ້. ຫຼາຍກ່ວານັ້ນ, ພຣະເຈົ້າໄດ້ໄຖ່ປະຊາກອນຂອງພຣະອົງອອກຈາກສັດຕຣູ. ແລະພວກເຂົາເປັນສັດຕຣູໂຫດຮ້າຍ! ຊາວອິສຣາເອັນໄດ້ຖືກຈັບເປັນຊະເລີຍໂດຍຜູ້ມີອຳນາດທີ່ສຸດໃນສມັຍນັ້ນ-ຊາວເອຢິບແລະຊາວບາບີໂລນຕໍ່ມາ. ເຖິງຢ່າງນັ້ນ, ບໍ່ວ່າຊາດໃດກໍຕາມທີ່ມີກຳລັງແຮງປານໃດທີ່ຍຶດຄອງປະຊາຊົນຂອງພຣະເຈົ້າ, ພຣະເຈົ້າໄດ້ພິສູດວ່າພຣະອົງສາມາດປົດປ່ອຍເຂົາໄດ້.

## 2. **ເພັງສັນລະເສີນ 107:4-7**

*4. ສ່ວນບາງຄົນທີ່ທ່ຽວໄປມາໃນຖິ່ນແຫ້ງແລ້ງກັນດານກໍບໍ່ອາດພົບພໍ້ຫົນທາງທີ່ຈະເຂົ້າໄປຢູ່ໃນເມືອງໄດ້. 5. ພວກເຂົາຫິວເຂົ້າຫິວນ້ຳແລະສູນເສັຽຄວາມຫວັງທຸກຢ່າງ. 6. ເມື່ອມີຄວາມທຸກຍາກລຳບາກ ພວກເຂົາໄດ້ຮ້ອງຫາພຣະຜູ້ເປັນເຈົ້າ ພຣະອົງກໍໄດ້ຊົງຊ່ອຍໃຫ້ພົ້ນຈາກຄວາມທຸກໂສກ. 7. ພຣະອົງຊົງນຳພວກເຂົາມຸ່ງໜ້າຕົງໄປອາສັຍຢູ່ໃນເມືອງ.*

ໃນຂໍ້ທີ່ 3 ສະແດງໃຫ້ເຫັນວ່າພຣະເຈົ້າໄດ້ເລີ້ມຕົ້ນທີ່ຈະເຕົ້າໂຮມປະຊາກອນຂອງພຣະອົງຈາກແຜ່ນດິນທີ່ຫ່າງໄກ, ໃນຂໍ້ 4 ໄດ້ແນະນຳໃຫ້ເຫັນປະສົບການຄວາມຍາກລຳບາກຕລອດການເດີນທາງ. ເມື່ອພວກເຮົາອ່ານຂໍ້ນີ້ພວກເຮົາສາມາດນຶກພາບໄດ້ຢ່າງງ່າຍດາຍຕໍ່ລູກຫຼານຊາວອິສຣາເອັນພາຍຫຼັງທີ່ພວກເຂົາເດີນອອກຈາກອີຢິບ. ຖິ່ນແຫ້ງແລ້ງກັນດານລະຫ່ວາງອີຢິບແລະອິສຣາເອັນຄົງຈະຮ້າຍແຮງ. ຍ້ອນການບໍ່ເຊື່ອຟັງຂອງພວກເຂົາ, ປະຊາຊົນພວກນີ້ຈຶ່ງໄດ້ເດີນທາງໃນຖິ່ນແຫ້ງແລ້ງກັນດານນີ້ເປັນເວລາສີ່ທົດສະວັດ (ສີ່ສິບປີ). ປະຊາຊົນພວກນີ້ອາດມີຄວາມຮູ້ສຶກສູນເສັຽຄວາມຫວັງ, “ບໍ່ສາມາດຊອກຫາຫົນທາງໄປເມືອງທີ່ພວກເຂົາຈະຢູ່ອາສັຍ" (ຂໍ້ 4) ນັບຕັ້ງແຕ່ພວກເຂົາຢູ່ໄກຈາກຄວາມສີວິໄລແລະສິ່ງທີ່ອຳນວຍຄວາມສະດວກຕ່າງໆ. ເຖິງຢ່າງໃດກໍຕາມ, ຂໍ້ພຣະຄັມພີເຫຼົ່ານີ້ອາດຈະໝາຍເຖິງປະຊາຊົນຂອງພຣະເຈົ້າໃນຫຼາຍສະຕະວັດຕໍ່ມາພວກເຂົາໄດ້ເດີນທາງກັບຈາກການເປັນທາດໃນບາບີໂລນເພື່ອກັບໄປຍັງບ້ານ

ເກີດເມືອງນອນຂອງພວກເຂົາ. ອິສຣາເອັນ, ມາຈາກເມືອງເກົ່າແກ່ເມໂຊໂປຕາເມັຍ, ໄດ້ທ່ອງທ່ຽວໄປຕາມເສັ້ນທາງທີ່ໂຄ້ງໄປທາງທິດຕາເວັນຕົກ, ຄູ່ກັນກັບທາງພາກເໜືອທີ່ອຸດົມສົມບູນກ່ອນທີ່ຈະຫັນໄປທາງໃຕ້ເພື່ອເຂົ້າໄປໃນດິນແດນຂອງອິສຣາເອັນ.

ຂໍ້ 5 ໄດ້ບັນລະຍາຍເຖິງສະຖານະການທີ່ຄ້າຍຄືກັນກັບຄົນເກົ່າແກ່ໃກ້ໆທາງທິດຕາເວັນອອກ: ໃນລະຫວ່າງການເດີນທາງນັ້ນເຂົາໝົດສິ້ນທັງສອງຢ່າງສະບຽງອາຫານແລະນໍ້າດື່ມ. ນີ້ເປັນສັນຍານອັນໜັກໜ່ວງທີ່ບົດເພງສັຣເສີນໄດ້ອ້າງເຖິງຊາວຢິວໃນຂະນະທີ່ພວກເຂົາກັບຄືນເມືອບ້ານເກີດຂອງພວກເຂົາຈາກການເປັນຊະເລີຍໃນບາບີໂລນ, ແທນທີ່ຈະແມ່ນພວກທີ່ໜີໄປຈາກປະເທດອີຢິບ.

ການເດີນທາງຂ້າມທະເລຊາຍແລະຂາດອາຫານແລະນໍ້າດື່ມບໍ່ແມ່ນແຕ່ບໍ່ມີຄວາມສະດວກ; ມັນເປັນການສ່ຽງຕໍ່ອັນຕຣາຍກັບການຈະມີຊີວິດຢູ່ຫຼືຈະຕາຍ. ເນື່ອງຈາກວ່າສະຖານະການໝົດຫວັງຂອງພວກເຂົາ, "ວິນຍານຂອງພວກເຂົາລົ້ມເຫຼວພາຍໃນພວກເຂົາ" (ຂໍ້ 5). ນີ້ບໍ່ໄດ້ໝາຍຄວາມວ່າພວກເຂົາພຽງແຕ່ທໍ້ຖອຍໃຈຫຼືໂສກເສົ້າ.

ການຮັບຮູ້ຄວາມທຸກຍາກຂອງເຂົາເຈົ້າ, ປະຊາຊົນ "ຮ້ອງໄຫ້ຫາພຣະຜູ້ເປັນເຈົ້າ" ( ຂໍ້ 6). ຄໍາສັບໃນພາສາເຮັບເຣີແປວ່າຮ້ອງອອກມາ ຄໍານີ້ແມ່ນໃຊ້ໃນເບື້ອງຕົ້ນເພື່ອພັນລະນາເຖິງສຽງຟ້າຮ້ອງ, ດັ່ງນັ້ນ. ການຮ້ອງທູນຂອງພວກເຂົາຕໍ່ພຣະເຈົ້າບໍ່ແມ່ນຄໍາອະທິຖານແບບງ່າຍໆຄືກັບຄົນທີ່ຂຽນໄວ້ກ່ອນເວລາທີ່ຈະກ່າວໃນການຊຸມນຸມໃນທີ່ສາທາລະນະ. ອັນນີ້ບໍ່ແມ່ນ, ນີ້ແມ່ນສຽງຮ້ອງໄຫ້ທີ່ດັງອອກມາຈາກສ່ວນເລິກຂ້າງໃນຈິດໃຈຂອງຄົນນັ້ນແລະເປັນສຽງທີ່ສະແດງອອກເຖິງຄວາມສິ້ນຫວັງ: "ພຣະເຈົ້າ! ພວກຂ້ານ້ອຍຕ້ອງການພຣະອົງ!"

ເມື່ອຄົນບໍ່ສາມາດເຮັດຫັຍງໄດ້ອີກ, ພວກເຂົາຍັງສາມາດອະທິຖານໄດ້. ເຖິງແມ່ນວ່າພວກເຂົາບໍ່ມີອໍານາດ, ພຣະເຈົ້າຍັງສາມາດຊ່ວຍໄດ້. ແທນທີ່ຈະປ່ອຍໃຫ້ເຂົາປະເຊີນກັບຄວາມຕາຍໃນຖິ່ນແຫ້ງແລ້ງກັນດານ, ພຣະເຈົ້າໄດ້ນໍາພາພວກເຂົາໄປຫາບ້ານເມືອງທີ່ພວກເຂົາຈະອາສັຍຢູ່-ບ່ອນທີ່ພວກເຂົາສາມາດສ້າງບ້ານເຮືອນໄດ້. ຜູ້ຂຽນບົດເພັງສັນລະເສີນໄດ້ຕັ້ງຂໍ້ຄຽງຄູ່ທີ່ກົງກັນຂ້າມໃນຂໍ້ທີ່ 4 ແລະຂໍ້ 7. ເມື່ອປຽບທຽບຂໍ້ພຣະຄັມພີເຫຼົ່ານີ້, ພວກເຮົາເຫັນວ່າພຣະເຈົ້າຕອບສນອງຕໍ່ສະຖານະການທີ່ໝົດຫວັງຂອງໄພ່ພົນຂອງພຣະອົງໂດຍການຕອບສນອງໃຫ້ເໝາະເຈາະກັບຄວາມຕ້ອງການຂອງພວກເຂົາ-ພຣະອົງໄດ້ນໍາພາພວກເຂົາໄປສູ່ຊັບພະຍາກອນທີ່ຈໍາເປັນ.

*ພຣະເຈົ້າໄດ້ນໍາພາທ່ານໃຫ້ຜ່ານຜ່າຄວາມຍາກລໍາບາກຢ່າງໃດ?*

### 3. ເພັງສັຣເສີນ 107:8-9

*8. ພວກເຂົາຕ້ອງຂອບພຣະຄຸນພຣະຜູ້ເປັນເຈົ້າຍ້ອນຄວາມຮັກອັນໝັ້ນຄົງຂອງພຣະອົງແລະຍ້ອນການອັສຈັນທີ່ພຣະອົງຊົງກະທໍາສໍາລັບພວກເຂົາ. 9. ພຣະອົງຊົງເຮັດໃຫ້ຜູ້ຫິວນໍ້າອີ່ມຢ່າງພໍໃຈແລະຜູ້ທີ່ຫິວເຂົ້າກໍອີ່ມດ້ວຍຂອງດີ.*

ຂໍ້ທີ 1 ໄດ້ຮຽກເອີ້ນໃຫ້ປະຊາຊົນເປັ່ງສຽງຮ້ອງຂຶ້ນໃນການຂອບພຣະຄຸນພຣະເຈົ້າເພາະພຣະເຈົ້າຊົງແສນດີ. ຂໍ້ພຣະຄັມພີເຫຼົ່ານີ້ເຕືອນພວກເຮົາໃຫ້ຮູ້ບຸນຄຸນສໍາລັບສິ່ງທີ່ພຣະເຈົ້າໄດ້ເຮັດ "ການອັສຈັນສໍາລັບມະນຸດທັງປວງ" ແລະໄດ້ຕອບສນອງຄວາມຕ້ອງການຂອງປະຊາກອນຂອງພຣະອົງ. ກ່ອນໜ້າໃນພຣະຄໍາເພັງສັຣເສີນນີ້, ພວກເຮົາເຫັນວ່າພຣະເຈົ້າພໍພຣະທັຍກັບຄົນທີ່ຮູ້ວ່າໝົດຫົນທາງໂດຍການຕອບສນອງເສັ້ນທາງແລະເມືອງ. ຂໍ້ທີ 5 ແນະນໍາຄົນທີ່ຫິວເຂົ້າແລະຫິວນໍ້າ. ເພາະພຣະເຈົ້າເປັນຜູ້ຈັດຫາໃຫ້, ພວກເຂົາໄດ້ຮັບການລ້ຽງດູຢ່າງສົມບູນ. ປະຊາຊົນຕອບສນອງດ້ວຍການຂອບພຣະຄຸນ. ໃນເວລາທີ່ພວກເຮົາຫິວ, ສູນເສັຽ, ຢ້ານ, ໃນອັນຕຣາຍຫຼືການເຈັບປວດ, ພວກເຮົາມັກຈະສົນໃຈໃສ່ແຕ່ຕົວເອງແລະຄວາມຕ້ອງການໃນປະຈຸບັນ. ເມື່ອພວກເຮົາຮ້ອງຫາພຣະເຈົ້າດ້ວຍຄວາມສິ້ນຫັວງຂອງພວກເຮົາແລະພຣະອົງໄດ້ຕອບສນອງຄວາມຕ້ອງການນັ້ນ, ພວກເຮົາສາມາດເບິ່ງກັບໄປດ້ວຍໃຈຂອບພຣະຄຸນ.

ຫຼັກການສໍາຄັນທີ່ເຮັດໃຫ້ແນ່ໃຈໃນພຣະຄໍາຕອນນີ້: ພຣະເຈົ້າທໍາງານໃນຈຸດປະສົງຄວາມຕ້ອງການຂອງມະນຸດ. ຫຼືເວົ້າອີກຢ່າງນຶ່ງ, ຄວາມຕ້ອງການຂອງພວກເຮົາເປັນຈຸດທີ່ພຣະເຈົ້າເຄື່ອນໄຫວຕາງໜ້າພວກເຮົາ. ແນ່ນອນຊາວອິສຣາເອັນຈະເບິ່ງບໍ່ເຫັນເຖິງຄວາມຍາກລໍາບາກນັ້ນໃນແງ່ບວກໃນຂະນະທີ່ພວກເຂົາຜ່ານຜ່າກັບວິກິດການຕ່າງໆຢູ່ນັ້ນ. ເມື່ອເບິ່ງຍ້ອນກັບໄປ, ພວກເຂົາສາມາດມີໃຈຂອບພຣະຄຸນພຣະເຈົ້າເພາະວ່າພວກເຂົາເຫັນວ່າພຣະເຈົ້າໄດ້ອວຍພອນພວກເຂົາ. ພວກເຮົາທຸກຄົນຜ່ານວິກິດການຫຼາຍຢ່າງ. ໃນຄວາມຫຍຸ້ງຍາກໃນປະຈຸບັນ, ເຖິງແມ່ນວ່າ, ບາງຄັ້ງພວກເຮົາບໍ່ເຫັນວິທີທີ່ພຣະເຈົ້າທໍາງານ. ຕລອດເວລາ, ພວກເຮົາສາມາດຮັບຮູ້ສີພຣະ

ທັດຂອງພຣະອົງກໍ່ຕໍ່ເມື່ອພວກເຮົາມອງຍ້ອນກັບໄປເບິ່ງພາບເຫດການທີ່ຜ່ານມາ, ນັ້ນຄືສິ່ງທີ່ຊາວອິສຣາເອັນໄດ້ເຮັດຢູ່ໃນບົດເພງສັຣເສີນ 107.

ສິ່ງດີສາມາດເກີດຈາກວິກິດການຕ່າງໆໄດ້. ຫຼັງຈາກພຣະເຈົ້າຕອບຮັບ, ຈາກນັ້ນພວກເຮົາກໍຈະສາມາດເຫັນຮູບພາບໃຫຍ່ໄດ້. ພວກເຮົາສຳນຶກໄດ້ວ່າ, ເຖິງແມ່ນໃນຂນະທີ່ພຣະເຈົ້າໄດ້ເຮັດຕາງໜ້າພວກເຮົາ, ພຣະອົງກໍເຮັດເຊັ່ນດຽວກັນກັບຄົນອື່ນໆ, ຄວາມຮູ້ບຸນຄຸນຂອງພວກເຮົາຈະເຕີບໂຕ, ຂນະທີ່ພວກເຮົາເຫັນທຸກໆທາງທີ່ພຣະອົງຊົງກະທຳ. ຖ້າພວກເຮົາສາມາດຢຸດໃນວິກິດການແລະເບິ່ງເໝືອນສາຍຕາຂອງນົກ (ເບິ່ງດ້ວຍສາຍຕາທີ່ກ້ວາງໄກ), ພວກເຮົາກໍມີແນວໂນ້ມທີ່ຈະເບິ່ງເຫັນວ່າພຣະເຈົ້າ “ຢູ່ເບື້ອງຫຼັງ” ທຳງານຮ່ວມກັນເພື່ອການດີ (ໂຣມ 8:28). ພວກເຮົາສາມາດຕອບສນອງຄວາມຮູ້ບຸນຄຸນແທນທີ່ຈະຈົ່ມຕໍ່ວ່າ. ຄວາມຮູ້ບຸນຄຸນຂອງພວກເຮົາແມ່ນຍ້ອນຄວາມຮູ້ສຶກຂຶ້ນໄດ້ໃນເວລາທີ່ພຣະເຈົ້າໄດ້ຊົງເປີດເຜີຍຄວາມດີຂອງພຣະອົງ, ຄວາມຮັກທີ່ສັດຊື່, ແລະຄວາມສາມາດເຄື່ອນໄຫວຢ່າງຊົງຣິດຕາງໜ້າຂອງເຮົາ.

## ນຳໃຊ້ໃນຊີວິດ

ພຣະຄຳເພງສັຣເສີນ 107 ເຕືອນພວກເຮົາໃຫ້ຮູ້ວ່າພຣະເຈົ້າສາມາດເຮັດໃຫ້ສະຖານະການທີ່ຊົ່ວຮ້າຍກັບກາຍເປັນດີໄດ້. ຈົ່ງເລືອກຂໍ້ນຶ່ງໃນການນຳໃຊ້ຕໍ່ລົງໄປນີ້:

- **ຈົ່ງຈົດຈຳ.** ທ່ານສາມາດຄິດເຖິງວິກິດການຕ່າງໆໃນຊີວິດຂອງທ່ານທີ່ພຣະເຈົ້າໄດ້ເຮັດໃຫ້ທຸກຢ່າງດີຂຶ້ນ, ເຖິງແມ່ນວ່າທ່ານເອງຍັງບໍ່ເຂົ້າໃຈໃນເວລານັ້ນບໍ? ຈົ່ງອະທິຖານແລະຂອບພຣະຄຸນພຣະເຈົ້າສຳລັບສິ່ງທີ່ດີທີ່ພຣະອົງໄດ້ເຮັດໃນຊີວິດຂອງທ່ານ.

- **ຈົດບັນທຶກ.** ພຣະເຈົ້າໄດ້ໃຊ້ບາງຄົນມາເພື່ອຊ່ວຍທ່ານໃນຊ່ວງເວລາໃດເວລານຶ່ງບໍ? ໃນອາທິດນີ້, ໃຫ້ຂຽນໜັງສືສົ່ງເຖິງເຂົາ, ໃຫ້ພວກເພິ່ນຮູ້ວ່າທ່ານດີໃຈແລະຢາກຂອບໃຈພວກເພິ່ນຫຼາຍປານໃດສຳລັບສິ່ງທີ່ພວກເພິ່ນໄດ້ເຮັດໃຫ້ກັບທ່ານ.

- **ຈົ່ງຕອບຮັບ.** ສ່ວນຫຼາຍພຣະເຈົ້າມັກຈະໃຊ້ບຸກຄົນໃຫ້ເປັນຜູ້ນຳຄວາມດີຂອງພຣະອົງໄປ. ທ່ານຮູ້ຈັກຄົນທີ່ເຈັບປ່ວຍ, ໂສກເສົ້າ, ໂຫຍຫິວ, ຫຼືເຈັບປວດບໍ? ຈົ່ງຍັບເຂົ້າໃກ້ແລະໃຫ້ການຊ່ວຍເຫຼືອ ຫຼືໃຫ້ການຊ່ວຍເຫຼືອຢ່າງໃກ້ຊິດໃນອາທິດນີ້ໄປຫາຢ່າງນ້ອຍນຶ່ງຄົນໃນການກ້າວຜ່ານວິກິດໄປໄດ້. ທ່ານທັງສອງຈະໄດ້ຂອບພຣະຄຸນພຣະເຈົ້າ.

ເປີຊີ ສະເປັນເຊີ ເບິ່ງບໍ່ເຫັນຄວາມຄິດທີ່ດີໆກ່ຽວກັບການເປື້ອຍຂອງຊ໋ອກໂກແລັດຂອງລາວ. ແຕ່ພວກເຮົາທຸກຄົນໄດ້ຮັບຜົນປໂຍດຈາກອຸບັດຕິເຫດຂອງລາວນັ້ນ. ເຖິງປານນັ້ນ, ພຣະເຈົ້າໄດ້ຊົງໃຊ້ຫຼາຍໆສິ່ງທີ່ພວກເຮົາອາດເບິ່ງຂ້າມໄປຫຼືເຂົ້າໃຈຜິດເພື່ອນຳເອົາພຣະພອນມາສູ່ຊີວິດຂອງພວກເຮົາ.

**ອຸປຖັມໂດຍລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ VR**